**MMG LXML Sepon**
MMG House, Bourichanh Road
Sisattanak District, PO Box 4486
Vientiane Capital, Lao PDR
T +856 21 268 200
sepon@mmg.com
**www.mmg.com**

# ບົດບັນນາທິການ - ບົດສໍາລັບໜ້າທຸລະກິດ, ເສດຖະກິດ-ສັງຄົມ

## ແມ່ຍິງໃນຂະແໜງບໍ່ແຮ່: ຄວາມມຸ່ງໝັ້ນຂອງພວກເຮົາໃນການສົ່ງເສີມຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມ

*ໂດຍ: ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ ແລະ ຜູ້ຈັດການພົວພັນກັບຜູ້ມີສ່ວນຮ່ວມ, MMG ລ້ານຊ້າງ ມິນເນໂຣນສ໌ ລິມິເຕັດ ບໍ່ຄໍາ-ທອງເຊໂປນ*

7 ມີນາ 2018

ການຂຸດຄົ້ນບໍ່ແຮ່ສ່ວນໃຫຍ່ ຈະຖືວ່າເປັນຂະແໜງການຂອງຜູ້ຊາຍ ແລະ ມີແຮງງານຜູ້ຊາຍເປັນສ່ວນຫຼາຍ. ແຕ່ໃນໂຕຈິງແລ້ວ, ແມ່ຍິງກໍມີບົດບາດສໍາຄັນຍິ່ງໃນອຸດສາຫະກໍາບໍ່ແຮ່ ແລະ ພວກເຮົາທຸກຄົນກໍຄວນສົ່ງເສີມ.

ທີ່ MMG ລ້ານຊ້າງ ມິນເນໂຣນສ໌ ລິມິເຕັດ ບໍ່ຄໍາ-ທອງເຊໂປນ, ພວກເຮົາຍັງສືບຕໍ່ມຸ່ງໝັ້ນໃນການປະຕິບັດ ເປົ້າໝາຍຂອງວັນແມ່ຍິງສາກົນ 2018 ເພື່ອ ເລັ່ງສູ່ການພັດທະນາ ຫຼື #PressForProgress ເຊິ່ງໝາຍວ່າ ພວກເຮົາທຸກຄົນເອົາໃຈໃສ່ ອຸດທິດ ແນວຄິດ, ການປະຕິບັດ ແລະ ສ້າງໃຫ້ເປັນສັງຄົມທີ່ມີສ່ວນຮ່ວມຂອງຍິງ-ຊາຍຢ່າງທົ່ວເຖິງ ແລະ ສະເໝີພາບ. ຄ□າສັບຄື ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງທຸກຄົນ ບໍ່ໄດ້ຖືວ່າເປັນ ປະເດັນສະເພາະກ່ຽວກັບແມ່ຍິງ ແຕ່ລ້ວນແລ້ວແຕ່ເປັນ ສິດທິ ທີ່ເປັນຂອງພວກເຮົາທຸກຄົນ.

ພວກເຮົາຮູ້ວ່າ ເພື່ອໃຫ້ກາຍເປັນບໍລິສັດຂຸດຄົ້ນແຮ່ຊັ້ນນໍາຂະໜາດກາງຂອງໂລກ, ພວກເຮົາຕ້ອງສຸມໃສ່ ພັດທະນາຊຸມຊົນ ແລະ ພະນັກງານ. ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ, ພວກເຮົາຕ້ອງສ້າງສະພາບແວດລ້ອມດັ່ງນີ້:

- ຍອມຮັບຄວາມແຕກຕ່າງ ແລະ ປະຕິບັດຕໍ່ທຸກຄົນຢ່າງມີຄຸນຄ່າເທົ່າທຽມກັນ, ແບບຫ່ວງໃຍ ແລະ ດ້ວຍຄວາມເຄົາລົບນັບຖືເຊິ່ງກັນ ແລະ ກັນ.
- ສົ່ງເສີມທຸກຄົນໃຫ້ເຮັດວຽກຮ່ວມກັນຕະຫຼອດເວລາ ເພື່ອສ້າງ ແລະ ຮັກສາສະພາບແວດລ້ອມການເຮັດວຽກທີ່ມີການປະກອບສ່ວນຂອງທຸກຄົນ ອັນຈະນໍາໄປສູ່ການຍົກລະດັບແນວຄິດ, ທັກສະ ແລະ ວິທີການເຮັດວຽກທີ່ຫຼາກຫຼາຍ ເພື່ອໃຫ້ພະນັກງານຂອງພວກເຮົາບັນລຸໄດ້ຄວາມສາມາດບົ່ມຊ້ອນ ແລະ ຮູ້ສຶກວ່າຕົນເອງມີຄຸນຄ່າ, ເປັນເຈົ້າການ ແລະ ເປັນສ່ວນໜຶ່ງຂອງອົງກອນ.
- ພັດທະນາຜູ້ນໍາທີ່ເຫັນຄຸນຄ່າ ແລະ ເຂົ້າໃຈການມີສ່ວນຮ່ວມຂອງພະນັກງານ ແລະ ສ້າງທີມງານທີ່ມີລັກສະນະສະເພາະໃນການເຮັດວຽກຮ່ວມມືກັນ, ມີແນວຄິດສ້າງສັນ ແລະ ມີປະສິດທິພາບ.
- ເຮັດໃນສິ່ງທີ່ໄດ້ເວົ້າໄວ້ ໂດຍການຜັນຂະຫຍາຍຮູບແບບການມີສ່ວນຮ່ວມຂອງພວກເຮົາ ໃນທຸກໆການພົວພັນ.

ໃນຖານະທີ່ເປັນອົງກອນໜຶ່ງ, ພວກເຮົາຮູ້ດີວ່າ ຈຸດແຂງຂອງບໍລິສັດແມ່ນມາຈາກ ການສົ່ງເສີມ ແລະ ຮັບຮູ້ທັກສະ ກໍຄື ຄວາມຮູ້ຂອງພະນັກງານທີ່ຫຼາກຫຼາຍຂອງພວກເຮົາ. ພວກເຮົາຈະເຮັດໄດ້ ດັ່ງທີ່ໄດ້ຕັ້ງໃຈໄວ້ຄືແນວນັ້ນ ດ້ວຍການສ້າງແຜນການພັດທະນາໄປສູ່ລະດັບຜູ້ນຳຢ່າງຊັດເຈນ, ການໃຫ້ໂອກາດກ້າວໜ້າໃນໜ້າທີ່ວຽກງານ ແລະ ການສ້າງສະພາບແວດລ້ອມການເຮັດວຽກທີ່ມີສ່ວນຮ່ວມຂອງພະນັກງານ ເຊິ່ງແມ່ຍິງທຸກຄົນສາມາດບັນລຸຕາມຄວາມສາມາດບົ່ມຊ້ອນຂອງພວກເຂົາໄດ້ຢ່າງເຕັມທີ່.

ຄວາມຫຼາກຫຼາຍແມ່ນເວົ້າເຖິງ ຄວາມແຕກຕ່າງ ແລະ ຈຸດພິເສດສະເພາະ. ມັນແມ່ນຄວາມແຕກຕ່າງດ້ານແນວຄິດ, ທັດສະນະຄະຕິ ແລະ ວິທີການປະຕິບັດທີ່ປະກອບສ່ວນຕໍ່ການປັບປຸງວິທີການເຮັດວຽກຂອງພວກເຮົາ. ຖ້າພວກເຮົາຕ້ອງການພັດທະນາ ແລະ ສ້າງວັດທະນະທຳໃນອຸດສາຫະກຳບໍ່ແຮ່ ໃຫ້ຫຼາກຫຼາຍ ແລະ ມີສ່ວນຮ່ວມສືບເນື່ອງໄປ, ພວກເຮົາກໍຕ້ອງສະໜັບສະໜູນ, ສົ່ງເສີມ ແລະ ຮັບຮອງຄວາມຫຼາກຫຼາຍ ແລະ ການມີສ່ວນຮ່ວມຂອງ ຜູ້ນຳ ແລະ ພະນັກງານໃນອົງກອນ ກໍຄື ຊຸມຊົນທ້ອງຖິ່ນ.

ພວກເຮົາໝາຍໝັ້ນຢ່າງສູງ ກ່ຽວກັບ ການເພີ່ມການມີສ່ວນຮ່ວມ ແລະ ການກະຈາຍສິດອຳນາດຂອງແມ່ຍິງໃນບ່ອນເຮັດວຽກ. ເພື່ອໃຫ້ບັນລຸໄດ້ດັ່ງທີ່ກ່າວໄວ້ນີ້, ພວກເຮົາເຊື່ອວ່າ ແມ່ຍິງ ແລະ ເດັກຍິງທີ່ມີສຸຂະພາບແຂງແຮງ ຈະເປັນພື້ນຖານອັນເຂັ້ມແຂງ ຕໍ່ຜົນສຳເລັດທີ່ຍາວນານບໍ່ວ່າໃນທາງສ່ວນຕົວ ຫຼື ໃນທາງວິຊາຊີບການງານ. ດ້ວຍເຫດຜົນນີ້, ບໍລິສັດ MMG ລ້ານຊ້າງ ມິນເນໂຣນສ໌ ລິມິເຕັດ ບໍ່ຄຳ-ທອງເຊໂປນ ຈຶ່ງໄດ້ ຮ່ວມມືແບບພິເສດກັບ ລັດຖະບານແຫ່ງ ສປປ ລາວ ແລະ ອົງການ UNICEF, ລົງທຶນໃສ່ໂຄງການ '1000 ວັນ' ເພື່ອປັບປຸງ ໂພຊະນາການ ແລະ ສຸຂະພາບຂອງແມ່ ແລະ ເດັກ. ມາຮອດປັດຈຸບັນ, ໂຄງການໄດ້ ແຈກຢາຍຝຸ່ນແຮ່ທາດ ຫຼາຍກວ່າ ສາມລ້ານຊອງ ແລະ ເຂົ້າເຖິງ ເດັກນ້ອຍ ແລະ ຄອບຄົວຂອງພວກເຂົາເຖິງ 150,000 ຄົນ.

ນັບຕັ້ງແຕ່ບໍ່ຄຳ-ທອງເຊໂປນ ໄດ້ເລີ່ມການດຳເນີນງານໃນປີ 2002 ເປັນຕົ້ນມາ, ບໍລິສັດ MMG ລ້ານຊ້າງ ມິນເນໂຣນສ໌ ລິມິເຕັດ ບໍ່ຄຳ-ທອງເຊໂປນ ໄດ້ ສືບຕໍ່ມຸ່ງໝັ້ນ ມອບອຳນາດໃຫ້ແກ່ແມ່ຍິງ ແລະ ສະໜັບສະໜູນການປະກອບສ່ວນຂອງແມ່ຍິງ ໃນບ່ອນເຮັດວຽກ ດ້ວຍການ ສ້າງ ແລະ ຮັບຮອງນຳໃຊ້ນະໂຍບາຍການເຮັດວຽກຈຳນວນໜຶ່ງ.

ຕົວຢ່າງ, ເພື່ອຮອງຮັບຄວາມຕ້ອງການຂອງຄອບຄົວ, ທາງບໍລິສັດໄດ້ ຫລຸດຜຽນວຽກໃຫ້ສັ້ນລົງ ຈາກ 28/14 (ເຮັດວຽກ 28 ມື້, ພັກ 14 ມື້) ເປັນ 14/7 ມື້. ການປ່ຽນແປງເລັກໆໜ້ອຍໆນີ້ ໄດ້ຊ່ວຍຮັບປະກັນໃຫ້ ພະນັກງານໂດຍສະເພາະ ພະນັກງານແມ່ຍິງ ໄດ້ມີເວລາພັກຜ່ອນ ແລະ ໃຊ້ເວລາເຕັມທີ່ກັບຄອບຄົວ ແລະ ຊຸມຊົນ. ພະນັກງານຂອງພວກເຮົາ ຍັງມີສິດກວດສຸກຂະພາບປະຈຳປີ ແລະ ມີສູນອອກກຳລັງກາຍ ເພື່ອຮັບປະກັນໃຫ້ພວກເຂົາ ມີສຸຂະພາບທີ່ແຂງແຮງ ແລະ ສາມາດເຂົ້າເຖິງການຮັກສາສຸຂະພາບ ອັນຈະມີຜົນຕໍ່ ຄວາມຢູ່ດີມີສຸກ ທັງກາຍ ແລະ ຈິດໃຈຂອງພວກເຂົາ.

ມາຮອດປັດຈຸບັນ, ພະນັກງານຍິງທີ່ບໍ່ຄຳ-ທອງເຊໂປນ ກວມເອົາເກືອບ 20% ແລະ ພະນັກງານຄວບຄຸມລົດແກ່ແຮ່ກວມເອົາເກືອບ 40% ເຊິ່ງສ່ວນໃຫຍ່ແມ່ນມາຈາກຊຸມຊົນທ້ອງຖິ່ນເມືອງວິລະບູລີ. ສະນັ້ນ ພວກເຮົາເວົ້າໄດ້ວ່າ ຂະແໜງການບໍ່ແຮ່ ເປັນບ່ອນທີ່ໃຫ້ໂອກາດອັນແທ້ຈິງ ໃຫ້ແມ່ຍິງມາເຮັດວຽກ, ພັດທະນາ ແລະ ກ້າວໜ້າ.

ພວກເຮົາສຸມໃສ່ການຮຽນຮູ້ ແລະ ຝຶກອົບຮົມ ເພື່ອພັດທະນາ ແລະ ມອບອຳນາດໃຫ້ແກ່ພະນັກງານຂອງບໍລິສັດ. ທີ່ບໍ່ຄຳ-ທອງເຊໂປນ, ພະນັກງານຂັບລົດແກ່ແຮ່ແມ່ຍິງຂອງພວກເຮົາຈຶ່ງໄດ້ເລີ່ມຜ່ານຫຼັກສູດຝຶກອົບຮົມເສີມທັກສະໃຫ້ຫຼາກຫຼາຍ ແລະ ສາມາດເຮັດວຽກໃນຕຳແໜ່ງວິຊາການ ກໍຄື ຕຳແໜ່ງດຳເນີນງານ. ເປົ້າໝາຍຫຼັກກໍເພື່ອໃຫ້ພວກ

ເຂົາມີໂອກາດກ້າວໜ້າໃນອາຊີບວຽກງານພາຍໃນ ແລະ ພາຍນອກອຸດສາຫະກຳບໍ່ແຮ່. ການຝຶກອົບຮົມທີ່ພວກເຮົາສະໜອງ ໄດ້ມອບອຳນາດໃຫ້ພະນັກງານຂອງພວກເຮົາດ້ານ 'ທຶນຊັບພະຍາກອນມະນຸດ', ຄວາມຮູ້ ແລະ ທັກສະເພື່ອພັດທະນາອາຊີບຂອງພວກເຂົາໃນປັດຈຸບັນ ແລະ ອານາຄົດ.

ທີ່ບໍ່ຄຳ-ທອງເຊໂປນ, ພວກເຮົາມີຄວາມພາກພູມໃຈທີ່ ຫວ່າງມໍ່ໆມານີ້ ພວກເຮົາໄດ້ສະເຫຼີມສະຫຼອງການຍົກລະດັບແມ່ຍິງຜູ້ຄວບຄຸມລົດເກດ ແລະ ແມ່ຍິງຜູ້ຄວບຄຸມລົດຕັດໄມ້ແມັນຊີມັກ ຜູ້ທຳອິດຂອງພວກເຮົາ ເຊິ່ງເວົ້າສະເພາະແມ່ນເປັນຜົນສຳເລັດທີ່ພົ້ນເດັ່ນ ຍ້ອນວ່າ ປັດຈຸບັນນີ້ ຍັງຖືວ່າເປັນໜ້າວຽກໃນອຸດສາຫະກຳບໍ່ແຮ່ ທີ່ເປັນຂອງຜູ້ຊາຍເປັນສ່ວນໃຫຍ່.

ການສ້າງ ແມ່ຍິງຜູ້ຄວບຄຸມລົດເກດ ແລະ ແມ່ຍິງຜູ້ຄວບຄຸມລົດຕັດໄມ້ແມັນຊີມັກ ຖືວ່າ ເປັນຜົນສຳເລັດອັນຍິ່ງໃຫຍ່ຂອງ ບໍ່ຄຳ-ທອງເຊໂປນ ແລະ ເປັນແຮງບັນດານໃຈອັນແທ້ຈິງ ສຳລັບແມ່ຍິງຄົນອື່ນໆຢູ່ ບໍ່ຄຳ-ທອງເຊໂປນ ແລະອຸດສາຫະກຳບໍ່ແຮ່ໃນ ສປປ ລາວ.

ນາງ ປ່ອກ ໄຊ່ແກ້ວ ຈາກເມືອງ ວິລະລູລີ ຈະເປັນ ແມ່ຍິງຜູ້ຄວບຄຸມລົດເກດຄົນທຳອິດຂອງພວກເຮົາ, ນາງໄດ້ກ່າວວ່າ:

*"ຂ້ອຍມີຄວາມພາກພູມໃຈຫຼາຍທີ່ຂ້ອຍສາມາດຄວບຄຸມລົດເກດ ເຊິ່ງເປັນພາຫະນະທີ່ຄວບຄຸມຍາກທີ່ສຸດ, ຍາກກວ່າການຄວບຄຸມລົດບັນທຸກແຮ່ ADT ຫຼາຍເທົ່າ. ອານາຄົດບໍ່ແນ່ນອນ. ສະນັ້ນ, ການສະສົມປະສົບການ, ທັກສະ ແລະຄຸນວຸທິເທົ່າທີ່ຈະເຮັດໄດ້ ຈະເປັນຈຸດໄດ້ປຽບຂອງຂ້ອຍ ເວລາຂ້ອຍສະໝັກວຽກຢູ່ບ່ອນອື່ນ."*

ທີ່ບໍ່ຄຳ-ທອງເຊໂປນ, ພວກເຮົາພາກພູມໃຈທີ່ຈະສືບຕໍ່ ຝຶກອົບຮົມ ແລະ ສ້າງພະນັກງານແມ່ຍິງທີ່ມີທີທັກສະຄວາມສາມາດຢູ່ແລ້ວ.

ນາງ ເພັດ ໄຊສົມບຸດ ມາຈາກເມືອງວິລະບູລີ *(ໃນຮູບ ຖ່າຍພ້ອມລົດຕັດໄມ້ແມັນຊີມັກ)*, ແມ່ນໜຶ່ງໃນກຸ່ມທຳອິດຂອງພະນັກງານເກັບກູ້ UXO ຜູ້ຍິງທີ່ພວມຜ່ານຫຼັກສູດການຝຶກອົບຮົມ ການຝຶກຊ້ອມຂັບລົດຕັດໄມ້ແມັນຊີມັກ. ການຝຶກອົບຮົມຢ່າງຊຸ້ນຊ້ອນນີ້ ປະກອບດ້ວຍການຝຶກຄວບຄຸມລົດແມັນຊີມັກຢ່າງຕ່ຳ 27 ຊົ່ວໂມງ ໃນສະພາບການຕ່າງໆ ລວມທັງໃນເຂດຄ້ອຍຊັນ. ນາງເພັດ ຍັງເປັນ ພະນັກງານວິຊາການ UXO ຂອງພວກເຮົາ ທີ່ໄດ້ສຳເລັດ ການຝຶກອົບຮົມ ກ່ຽວກັບ ການທຳລາຍລະເບີດ ລະດັບ 1 (Explosive Ordnance Disposal Level 1 training) ໃນປີ 2016 ເຊິ່ງເປັນ ຫຼັກສູດທີ່ເປັນທີ່ຍອມຮັບໃນລະດັບສາກົນ.

ໃນຕໍ່ໜ້າ, ບໍລິສັດ ລ້ານຊ້າງ ມິນເນໂຣນສ໌ ລິມິເຕັດ ບໍ່ຄຳ-ທອງເຊໂປນ ຈະສືບຕໍ່ມຸ່ງໝັ້ນສະໜັບສະໜູນອຸດສາຫະກຳບໍ່ແຮ່, ສປປ ລາວ ແລະ ປະຊາຄົມໂລກ ເພື່ອໃຫ້ບັນລຸໄດ້ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການກະຈາຍອຳນາດໃຫ້ແມ່ຍິງ ທັງຢູ່ບ່ອນເຮັດວຽກ ແລະ ຢູ່ບ້ານ ໃຫ້ ເລັ່ງສູ່ການພັດທະນາ ຫຼື #PressForProgress: ເພື່ອຄິດ, ປະຕິບັດ ແລະ ເປັນສັງຄົມທີ່ມີສ່ວນຮ່ວມຂອງຍິງ-ຊາຍຢ່າງທົ່ວເຖິງ ແລະ ສະເໝີພາບ.




**ພາບ:** ນາງ ເພັດ ໄຊສົມບຸດ ຈະກາຍເປັນ ແມ່ຍິງຜູ້ຄວບຄຸມລົດຕັດໄມ້ແມັນຊີນັກ ຜູ້ທຳອິດຂອງ ບໍ່ຄຳ-ທອງເຊໂປນ.